# ບອກຂ້ອຍເພີ່ມເຕີມກ່ຽວກັບ...
# ການລົງທະບຽນໃນໂຄງການເບິ່ງແຍງດູແລໄລຍະຍາວທີ່ລັດຖະບານສະໜອງທຶນໃຫ້

**(Tell Me More About... Enrolling in Publicly Funded Long-Term Care Programs)**

ການເບິ່ງແຍງດູແລໄລຍະຍາວແມ່ນການບໍລິການ ຫຼື ການຊ່ວຍເຫຼືອທີ່ຄົນອາດຈະຕ້ອງການເນື່ອງຈາກຜົນຂອງການມີອາຍຸສູງຂຶ້ນ ຫຼື ມີຄວາມພິການທີ່ຈຳກັດຄວາມອາດສາມາດຂອງພວກເຂົາທີ່ຈະເຮັດສິ່ງຕ່າງໆທີ່ເປັນສ່ວນຂອງການເຮັດກິດຈະວັດປະຈຳວັນຂອງພວກເຂົາ. ນີ້ລວມມີສິ່ງຕ່າງໆເຊັ່ນ: ການອາບນ້ຳ, ການນຸ່ງເຄື່ອງ, ການແຕ່ງອາຫານ, ການໄປເຮັດວຽກ ແລະ ການຈ່າຍໃບບິນຕ່າງໆ.

ບຸກຄົນທີ່ສົນໃຈໃນການຮຽນຮູ້ເພີ່ມເຕີມກ່ຽວກັບທາງເລືອກຂອງພວກເຂົາສຳລັບການເບິ່ງແຍງດູແລໄລຍະຍາວຄວນຕິດຕໍ່ aging and disability resource center (ສູນຂໍ້ມູນຄວາມພິການ ແລະ ສູງອາຍຸ) (ADRC) ປະຈຳທ້ອງຖິ່ນຂອງພວກເຂົາ ຫຼື tribal aging and disability resource specialist (ຜູ້ຊ່ຽວຊານຂໍ້ມູນຄວາມພິການ ແລະ ສູງອາຍຸຊົນເຜົ່າ) (ADRS), ໃນບ່ອນທີ່ມີໃຫ້. ບໍລິການຂອງ ADRC ແລະ ADRS ຂອງຊົນເຜົ່າແມ່ນມີໃຫ້ກັບທຸກໆຄົນ, ບໍ່ວ່າພວກເຂົາຈະມີສິດໄດ້ຮັບການເບິ່ງແຍງດູແລໄລຍະຍາວທີ່ລັດຖະບານສະໜອງທຶນໃຫ້ ຫຼື ໂຄງການ Medicaid ອື່ນໆຫຼືບໍ່ກໍຕາມ. ໂຄງການເບິ່ງແຍງດູແລໄລຍະຍາວທີ່ລັດຖະບານສະໜອງທຶນໃຫ້ຢູ່ໃນພື້ນທີ່ຂອງທ່ານລວມມີ Family Care; Include, Respect, I Self-Direct (ລວມເອົາ, ເຄົາລົບນັບຖື, ຂ້ອຍສັ່ງຕົວເອງ) (IRIS); Partnership; ແລະ Program of All-Inclusive Care for the Elderly (ໂຄງການເບິ່ງແຍງດູແລຮອບດ້ານທຸກຢ່າງສຳລັບຜູ້ສູງອາຍຸ) (PACE). ມັນອາດຈະໃຊ້ເວລາໜຶ່ງຫາສາມເດືອນເພື່ອກຳນົດການມີສິດໄດ້ຮັບ ແລະ ລົງທະບຽນເຂົ້າສູ່ໂຄງການເບິ່ງແຍງດູແລໄລຍະຍາວ.

ເພື່ອໃຫ້ມີສິດໄດ້ຮັບໂຄງການເບິ່ງແຍງດູແລໄລຍະຍາວເຫຼົ່ານີ້, ທ່ານຕ້ອງ:

- ມີອາຍຸ 65 ປີຂຶ້ນໄປ ຫຼື ເປັນຜູ້ໃຫຍ່ພິການ.
- ມີຄົບເງື່ອນໄຂບັງຄັບໃຊ້ຂອງການເປັນຜູ້ຢູ່ອາໄສຂອງລັດວິສຄອນຊິນ.
- ມີຄວາມຈຳເປັນໃນການບໍລິການເບິ່ງແຍງດູແລໄລຍະຍາວທີ່ມີຄົບຕາມເງື່ອນໄຂກຳນົດການມີສິດໄດ້ຮັບຕາມໜ້າທີ່ຂອງໂຄງການ.
- ບັນລຸໄດ້ຕາມເງື່ອນໄຂກຳນົດການມີສິດໄດ້ຮັບທາງການເງິນ.

ຄົນທີ່ໄດ້ຮັບຜົນປະໂຫຍດການເບິ່ງແຍງດູແລໄລຍະຍາວອາດຈະຕ້ອງໄດ້ຈ່າຍສ່ວນແບ່ງຄ່າໃຊ້ຈ່າຍສຳລັບໂຄງການເບິ່ງແຍງດູແລໄລຍະຍາວທີ່ພວກເຂົາເລືອກລົງທະບຽນເຂົ້າຮ່ວມ. income maintenance agency (ໜ່ວຍງານຮັກສາລາຍຮັບ) ຈະກຳນົດຈຳນວນສ່ວນແບ່ງຄ່າໃຊ້ຈ່າຍ, ຖ້າສາມາດກຳນົດໄດ້. ADRC ຫຼື ADRS ຂອງຊົນເຜົ່າຈະອະທິບາຍເງື່ອນໄຂກຳນົດເຫຼົ່ານີ້ໃຫ້ກັບທ່ານ.

## ຂັ້ນຕອນການລົງທະບຽນ

### 1. ການມີສິດໄດ້ຮັບຕາມໜ້າທີ່

ADRC ຫຼື ADRS ຂອງຊົນເຜົ່າຈະເຂົ້າມາເບິ່ງກັບທ່ານເພື່ອເຮັດ Long-Term Care Functional Screen (ການກວດໜ້າທີ່ການເບິ່ງແຍງດູແລໄລຍະຍາວ) ໃຫ້ສຳເລັດ. ການກວດຈະປະເມີນລະດັບຄວາມຕ້ອງການຂອງທ່ານສຳລັບບໍລິການຕ່າງໆ ແລະ ກຳນົດການມີສິດໄດ້ຮັບໂຄງການເບິ່ງແຍງດູແລໄລຍະຍາວທີ່ລັດຖະບານໃຫ້ທຶນຕາມໜ້າທີ່ຂອງທ່ານ.

### 2. ການມີສິດໄດ້ຮັບທາງດ້ານການເງິນ

ຖ້າທ່ານເປັນຜູ້ຮັບ Medicaid ເຕັມຜົນປະໂຫຍດ, ທ່ານຈະຕ້ອງບໍ່ປະກອບໃສ່ຂະບວນການສະໝັກຂໍດ້ານການເງິນ, ແຕ່ຈະຕ້ອງຕອບບາງຄຳຖາມເພີ່ມເຕີມເພື່ອໃຫ້ແນ່ໃຈວ່າທ່ານມີຄົບຕາມມາດຖານການມີສິດໄດ້ຮັບດ້ານການເງິນໂຄງການເບິ່ງແຍງດູແລໄລຍະຍາວທີ່ລັດຖະບານສະໜອງທຶນໃຫ້.

ຖ້າທ່ານບໍ່ເປັນຜູ້ຮັບ Medicaid ເຕັມຜົນປະໂຫຍດໃນປັດຈຸບັນ, ADRC ຫຼື ADRS ຂອງຊົນເຜົ່າຈະຊ່ວຍທ່ານຕິດຕໍ່ income maintenance agency (ອົງການຮັກສາລາຍຮັບ) ແລະ ໃຫ້ການຊ່ວຍເຫຼືອທີ່ຈຳເປັນໃດໜຶ່ງກ່ຽວກັບໃບຄຳຮ້ອງທີ່ກຳນົດການມີສິດໄດ້ຮັບທາງດ້ານການເງິນຂອງທ່ານ.

### 3. ການໃຫ້ຄຳປຶກສາການລົງທະບຽນ

ADRC ຫຼື ADRS ຂອງຊົນເຜົ່າຈະຕິດຕໍ່ທ່ານເພື່ອແບ່ງປັນທາງເລືອກການເບິ່ງແຍງດູແລໄລຍະຍາວທີ່ມີໃຫ້ກັບທ່ານ ແລະ ຊ່ວຍໃຫ້ທ່ານເຂົ້າໃຈສິ່ງທີ່ມັນໝາຍເຖິງເພື່ອເປັນສະມາຊິກຂອງໂຄງການເບິ່ງແຍງດູແລໄລຍະຍາວທີ່ລັດຖະບານສະໜອງທຶນໃຫ້. ADRC ຫຼື ADRS ຂອງຊົນເຜົ່າຈະຊ່ວຍທ່ານໃນການປະກອບການລົງທະບຽນ ຫຼື ເອກະສານສິ່ງຕໍ່ໃຫ້ສຳເລັດ, ຖ້າທ່ານເລືອກຈະລົງທະບຽນ. ວັນທີລົງທະບຽນ ຫຼື ສິ່ງຕໍ່ຂອງທ່ານຈະຖືກກຳນົດໃນລະຫວ່າງການປຶກສາການລົງທະບຽນ. ວັນທີລົງທະບຽນບໍ່ສາມາດເປັນວັນທີຍ້ອນຫຼັງໄດ້.

ເມື່ອການມີສິດໄດ້ຮັບການເບິ່ງແຍງດູແລໄລຍະຍາວຂອງທ່ານໄດ້ຖືກກຳນົດ, ADRC ຫຼື ADRS ຂອງຊົນເຜົ່າຈະໃຫ້ຂໍ້ມູນກ່ຽວກັບທາງເລືອກຕ່າງໆທີ່ມີໃຫ້ກັບທ່ານ. ທາງເລືອກຕ່າງໆອາດຈະລວມມີການລົງທະບຽນຢູ່ໃນ Family Care, IRIS, Partnership ຫຼື PACE. ທ່ານຍັງອາດຈະສາມາດເລືອກທີ່ຈະຮັບບໍລິການຕ່າງໆໄດ້ຜ່ານລະບົບຄ່າທຳນຽມບໍລິການຂອງ Medicaid ຫຼື ເພື່ອຈ່າຍຄ່າບໍລິການແບບສ່ວນຕົວໄດ້.

ຖ້າທ່ານຕັດສິນໃຈລົງທະບຽນໃນໂຄງການເບິ່ງແຍງດູແລໄລຍະຍາວ, ADRC ຫຼື ADRS ຂອງຊົນເຜົ່າຈະເຮັດການລົງທະບຽນ ຫຼື ປະກອບເອກະສານການສິ່ງຕໍ່ໃຫ້ຄົບຖ້ວນ, ເຮັດການລົງທະບຽນ ຫຼື ຂະບວນການສິ່ງຕໍ່ໃຫ້ສຳເລັດ ແລະ ແຈ້ງ managed care organization (ອົງການເບິ່ງແຍງດູແລທີ່ໄດ້ຮັບການຄຸ້ມຄອງ) (MCO) ຫຼື IRIS consultant agency (ໜ່ວຍງານທີ່ປຶກສາຂອງ IRIS) (ICA) ໃນເລື່ອງວັນທີການລົງທະບຽນ ຫຼື ການສິ່ງຕໍ່. ພາຍໃນສາມວັນຫຼັງຈາກວັນທີລົງທະບຽນ ຫຼື ສິ່ງຕໍ່ຂອງທ່ານ, MCO ຫຼື ICA ຈະຕິດຕໍ່ທ່ານເພື່ອເລີ່ມເຮັດວຽກກ່ຽວກັບແຜນການຂອງທ່ານສຳລັບການບໍລິການ ແລະ ການສະໜັບສະໜູນ.

## ໂຄງການເບິ່ງແຍງດູແລໄລຍະຍາວທີ່ລັດຖະບານສະໜອງທຶນໃຫ້ຢູ່ໃນພື້ນທີ່ຂອງທ່ານ

ຂໍ້ນີ້ໃຫ້ຮູ້ກ່ຽວກັບຄຳອະທິບາຍຫຍໍ້ຂອງໂຄງການທີ່ອາດຈະມີໃຫ້ຢູ່ໃນບ່ອນທີ່ທ່ານຢູ່. ADRC ຫຼື ADRS ຂອງຊົນເຜົ່າຈະແບ່ງປັນຂໍ້ມູນເພີ່ມເຕີມກ່ຽວກັບແຕ່ລະໂຄງການເມື່ອທ່ານຖືກກຳນົດການມີສິດໄດ້ຮັບທາງດ້ານໜ້າທີ່ ແລະ ທາງດ້ານການເງິນ.

### Family Care

Family Care ແມ່ນໂຄງການເບິ່ງແຍງດູແລໄລຍະຍາວຂອງ Medicaid ສຳລັບຜູ້ສູງອາຍຸທີ່ບໍ່ແຂງແຮງ ແລະ ຜູ້ໃຫຍ່ທີ່ມີຄວາມພິການທາງດ້ານຮ່າງກາຍ, ພັດທະນາການ ຫຼື ປັນຍາ. ຢູ່ໃນ Family Care, ທ່ານຈະໄດ້ຮັບບໍລິການເບິ່ງແຍງດູແລໄລຍະຍາວເພື່ອຊ່ວຍທ່ານດຳລົງຊີວິດຢູ່ໃນບ້ານຂອງທ່ານເອງໃນເມື່ອເປັນໄປໄດ້. Family Care ແມ່ນໂຄງການປັບປຸງແປງໃໝ່ທີ່ໃຫ້ບໍລິການເບິ່ງແຍງດູແລໄລຍະຍາວເຕັມຂອບເຂດ, ເຖິງແມ່ນວ່າເປັນໂຄງການໃຫ້ຜົນປະໂຫຍດທີ່ຜ່ອນຜັນໄດ້ໂຄງການໜຶ່ງ. ສະມາຊິກຂອງຊົນເຜົ່າ Menominee ແລະ Oneida ອາດຈະມີສິດໄດ້ຮັບບໍລິການຄຸ້ມຄອງເລື່ອງຊົນເຜົ່າຜ່ານ Family Care.

ຖ້າຫາກພົບວ່າທ່ານມີສິດໄດ້ຮັບຕາມໜ້າທີ່ຢູ່ໃນລະດັບການເບິ່ງແຍງດູແລທີ່ບໍ່ແມ່ນບ້ານພັກຄົນຊະລາ, ທ່ານອາດຈະມີສິດໄດ້ຮັບແຕ່ບໍລິການໃນຊຸດທີ່ຈຳກັດເທົ່ານັ້ນ.

### Partnership

Partnership ແມ່ນໂຄງການເບິ່ງແຍງດູແລໄລຍະຍາວຂອງ Medicaid ສຳລັບຜູ້ສູງອາຍຸທີ່ບໍ່ແຂງແຮງ ແລະ ຜູ້ໃຫຍ່ທີ່ມີຄວາມພິການທາງດ້ານຮ່າງກາຍ, ພັດທະນາການ ຫຼື ປັນຍາຜູ້ທີ່ມີລະດັບການເບິ່ງແຍງດູແລໃນບ້ານພັກຄົນຊະລາ. ໂຄງການ Partnership ໃຫ້ຕົວແບບການເບິ່ງແຍງດູແລແບບປະສົມປະສານທີ່ລວມມີບໍລິການເບິ່ງແຍງດູແລໄລຍະຍາວໃນບ້ານ ແລະ ໃນຊຸມຊົນ, ພ້ອມທັງການເບິ່ງແຍງດູແລໃນບ້ານພັກຄົນຊະລາ ແລະ ສະຖາບັນອື່ນໆ, ບໍລິການຂອງແພດ, ການພັກປິ່ນປົວຢູ່ໂຮງໝໍ, ການໃຫ້ຢາປິ່ນປົວ, ການບໍລິການແຂ້ວ ແລະ ການເບິ່ງແຍງດູແລອື່ນໆ.

### Program of All-Inclusive Care for the Elderly (ໂຄງການເບິ່ງແຍງດູແລຮອບດ້ານທຸກຢ່າງສຳລັບຜູ້ສູງອາຍຸ) (PACE)

PACE ເຊັ່ນ: Partnership ປະສົມປະສານບໍລິການເບິ່ງແຍງດູແລໄລຍະຍາວ, ບໍລິການເບິ່ງແຍງດູແລທາງການແພດ ແລະ ສຸຂພາບ (ການເບິ່ງແຍງດູແລຕົ້ນຕໍ ແລະ ຮູນແຮງ) ແລະ ການປິ່ນປົວດ້ວຍຢາຕາມການສັ່ງຢາຂອງແພດ. PACE ແມ່ນມີໃຫ້ກັບບຸກຄົນອາຍຸ 55 ປີຂຶ້ນໄປ, ໄດ້ຕາມລະດັບການເບິ່ງແຍງດູແລໃນບ້ານພັກຄົນຊະລາ ແລະ ອາໄສຢູ່ໃນຄາວຕີ້ Kenosha, Milwaukee, Racine ຫຼື Waukesha. ການບໍລິການຂອງ PACE ນັ້ນຕົ້ນຕໍແມ່ນຈັດໃຫ້ກັບສູນ PACE ແລະ ໃຫ້ເສີມເລື່ອງການເບິ່ງແຍງດູແລຢູ່ໃນບ້ານຂອງທ່ານ ຫຼື ສະຖານທີ່ທ່ານເລືອກ.

### Include, Respect, I Self-Direct (ລວມເຂົ້ານຳ, ເຄົາລົບ, ຂ້ອຍສັ່ງຕົວເອງ) (IRIS)

IRIS ແມ່ນໂຄງການສັ່ງຕົວເອງສຳລັບຜູ້ສູງອາຍຸບໍ່ແຂງແຮງ ແລະ ຜູ້ໃຫຍ່ພິການທີ່ມີເງື່ອນໄຂຕາມລະດັບການເບິ່ງແຍງດູແລໃນບ້ານພັກຄົນຊະລາຂອງລັດວິດສະຄອນຊິນ. IRIS ໄດ້ຮັບການສ້າງຂຶ້ນບົນພື້ນຖານຫຼັກການວ່າດ້ວຍການກຳນົດຕົວເອງ ແລະ ການສັ່ງຕົວເອງ. ຢູ່ໃນ IRIS, ງົບປະມານໄດ້ຮັບການກຳນົດໄວ້ສຳລັບທ່ານອີງຕາມຄວາມຕ້ອງການເບິ່ງແຍງດູແລໄລຍະຍາວຂອງທ່ານ. ທ່ານຕ້ອງຕັດສິນໃຈວ່າສິນຄ້າ, ການສະໜັບສະໜູນ ຫຼື ການບໍລິການໃດທີ່ຈະຊ່ວຍໃຫ້ທ່ານບັນລຸເປົ້າໝາຍຂອງທ່ານ ແລະ ການນຳໃຊ້ງົບປະມານຂອງທ່ານ, ທ່ານຈະຊ່ວຍສ້າງແຜນການສະໜັບສະໜູນ ແລະ ບໍລິການທີ່ໄດ້ຕາມຄວາມຕ້ອງການຂອງທ່ານ. ບໍລິການ IRIS ຈະຢູ່ທີ່ນັ້ນເພື່ອຊ່ວຍທ່ານດຳລົງຊີວິດຢູ່ໃຫ້ມີຄວາມໝາຍ.